ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ເລກທີ 0857 /ຮສສ

ນະຄອນຫລວງວຽງຈັນ, ວັນທີ 29 ມີນາ 2018

# ແຈ້ງການແນະນຳ

**ເຖິງ:** ທ່ານ ຫົວໜ້າຫ້ອງການ, ບັນດາທ່ານ ຫົວໜ້າກົມ;
- ຫົວໜ້າຫ້ອງການອົງການກາແດງລາວ;
- ຫົວໜ້າຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ;
- ຜູ້ອຳນວຍການ ຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ;
- ຫົວໜ້າສະຖາບັນພັດທະນາສີມືແຮງງານລາວ-ເກົາຫຼີ;
- ຫົວໜ້າ ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ-ນະຄອນຫຼວງ.

**ເລື່ອງ:** ການເກັບກຳຂໍ້ມູນສະຖິຕິດ້ານແຮງງານ ແລະ ສະຫວັດດີການສັງຄົມ

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 200/ນຍ, ລົງວັນທີ 30 ມິຖຸນາ 2017;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ລະບົບສະຖິຕິຂອງຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 1824/ຮສສ, ລົງວັນທີ 6 ມິຖຸນາ 2017.

ເພື່ອເຮັດໃຫ້ລະບົບຂໍ້ມູນສະຖິຕິດ້ານແຮງງານ ແລະ ສະຫວັດດີການສັງຄົມໄດ້ຮັບການເກັບກຳ, ຄຸ້ມຄອງ ແລະ ລາຍງານ ຢ່າງເປັນລະບົບ, ລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

**ລັດຖະມົນຕີ ອອກແຈ້ງການແນະນຳ ດັ່ງນີ້:**

## I. ການແບ່ງຄວາມຮັບຜິດຊອບ

ໃຫ້ບັນດາກົມ, ຫ້ອງການອົງການກາແດງລາວ, ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ, ຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ, ສະຖາບັນພັດທະນາສີມືແຮງງານລາວ-ເກົາຫຼີ ແລະ ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ-ນະຄອນ ຫຼວງ ເອົາໃຈໃສ່ໃນການເກັບກຳຂໍ້ມູນ, ຄົ້ນຄວ້າ, ວິໄຈ, ສະໜອງ ແລະ ປ້ອນຂໍ້ມູນຕົວຊີ້ວັດ ຕາມຄວາມຮັບຜິດ ຊອບ ຂອງຕົນ ດັ່ງນີ້:

### 1. ກົມແຜນການ ແລະ ການຮ່ວມມືສາກົນ

1). ຈຳນວນການຈ້າງງານທັງໝົດ;
2). ອັດຕາສ່ວນການຈ້າງງານຕໍ່ພົນລະເມືອງ;
3). ຈຳນວນຄົນວ່າງງານ;
4). ອັດຕາວ່າງງານ;
5). ຈຳນວນກຳລັງແຮງງານທັງໝົດ;

6). ຜູ້ບໍ່ຢູ່ໃນກຳລັງແຮງງານ;
7). ອັດຕາເພີ່ມຂອງລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນທີ່ຖືກຈ້າງງານ;
8). ຄ່າແຮງງານສະເລ່ຍຕໍ່ເດືອນ;
9). ລາຍຮັບສະເລ່ຍຕໍ່ຊົ່ວໂມງ;
10). ຜະລິດຕະພາບແຮງງານ (GDP/ຄົນ);
11). ອັດຕາການຂະຫຍາຍຕົວຂອງ GDP ຕໍ່ປີ ຕໍ່ຜູ້ມີວຽກເຮັດງານທຳ;
12). ອັດຕາປົກຄຸມປະກັນສັງຄົມ ແລະ ປະກັນສຸຂະພາບ.

## 2. ກົມພັດທະນາສີມືແຮງງານ ແລະ ຈັດຫາງານ

1). ຄວາມຕ້ອງການຂອງຕະຫຼາດແຮງງານ
- ຄວາມຕ້ອງການແຮງງານລາວຂອງຕະຫລາດແຮງງານຢູ່ພາຍໃນປະເທດ;
- ຄວາມຕ້ອງການຂອງຕະຫຼາດແຮງງານລາວຢູ່ຕ່າງປະເທດ;

2). ຝຶກສີມືແຮງງານໃຫ້ແຮງງານລາວ ຕາມຂະແໜງການ, ແຍກເພດ;
3). ການຈັດຫາງານຢູ່ພາຍໃນ ແລະ ຕ່າງປະເທດ
- ຈັດຫາງານພາຍໃນປະເທດ ຕາມຂົງເຂດເສດຖະກິດ ແຍກຕາມເພດ;
- ຈັດຫາງານໄປຕ່າງປະເທດ ຕາມຂົງເຂດເສດຖະກິດ ແຍກເພດ;

4). ລາຍຮັບທີ່ສົ່ງກັບປະເທດຂອງຜູ້ອອກແຮງງານລາວທີ່ເຮັດວຽກຢູ່ຕ່າງປະເທດ;
5). ລາຍຮັບທີ່ສົ່ງກັບປະເທດຂອງຜູ້ອອກແຮງງານຕ່າງປະເທດທີ່ເຮັດວຽກຢູ່ ສປປ ລາວ;
6). ຈຳນວນແຮງງານຕ່າງປະເທດ ຕາມຂົງເຂດເສດຖະກິດ ແຍກເພດ, ສັນຊາດ
- ຈຳນວນນຳເຂົ້າແຮງງານຕ່າງປະເທດ ຕາມຂົງເຂດເສດຖະກິດ, ແຍກເພດ, ສັນຊາດ;
- ຈຳນວນແຮງງານຕ່າງປະເທດທີ່ຂຶ້ນທະບຽນໃໝ່ ແຍກເພດ, ສັນຊາດ;
- ຈຳນວນແຮງງານຕ່າງປະເທດທີ່ມາຂໍທະບຽນ ແຍກເພດ, ສັນຊາດ;
- ຈຳນວນແຮງງານຕ່າງປະເທດ ທີ່ກັບຄືນປະເທດພາຍຫລັງສິ້ນສຸດສັນຍາແຮງງານ;

7). ຈຳນວນຜູ້ທີ່ມີວຽກເຮັດງານທຳໃໝ່ ແຍກເພດ;
8). ການເພີ່ມຂຶ້ນຂອງຜູ້ທີ່ມີວຽກເຮັດງານທຳໃໝ່ສະເລ່ຍປີ;
9). ຄ່າແຮງງານສະເລ່ຍຂອງແຮງງານຕ່າງປະເທດທີ່ມາເຮັດວຽກຢູ່ ສປປ ລາວ ແຍກຕາມຂະແໜງເສດຖະກິດ;
10). ຈຳນວນແຮງງານເຄື່ອນຍ້າຍພາຍໃນປະເທດ ແຍກເພດ;
11). ຈຳນວນແຮງງານເຄື່ອນຍ້າຍໄປຕ່າງປະເທດ ແຍກເພດ;
12). ອາຊີບຂອງແຮງງານໃນລະບົບເສດຖະກິດ;
13). ຂຶ້ນທະບຽນຜູ້ຕ້ອງການມີວຽກເຮັດງານທຳ ແຍກເພດ;
14). ຈຳນວນຜູ້ວ່າງງານແຍກເພດ ແລະ ກຸ່ມອາຍຸ;
15). ຈຳນວນຜູ້ວ່າງງານແບ່ງຕາມລະດັບການສຶກສາ ແຍກເພດ ;
16). ຈຳນວນຜູ້ວ່າງງານຂອງແຮງງານໜຸ່ມແຍກເພດ;
17). ອັດຕາການວ່າງງານ ແຍກເພດ ແລະ ອາຍຸ;
18). ຈຳນວນກຳລັງແຮງງານໄວໜຸ່ມອາຍຸແຕ່ 12 ຫາ 24 ປີ ແຍກເພດ;
19). ຈຳນວນກຳລັງແຮງງານອາຍຸແຕ່ 25 ຫາ 34 ປີ ແຍກເພດ;
20). ຈຳນວນກຳລັງແຮງງານອາຍຸແຕ່ 35 ຫາ 54 ປີ ແຍກເພດ;
21). ຈຳນວນກຳລັງແຮງງານອາຍຸແຕ່ 55 ຫາ 64 ປີ ແຍກເພດ;

22). ຈຳນວນນັກວິຊາການ ແຍກເພດ;

23). ຈຳນວນຊ່າງຜູ້ຊຳນານງານ ແຍກເພດ;

24). ອັດຕາສ່ວນຂອງກຳລັງແຮງງານທີ່ມີການສຶກສາໃນລະດັບມັດທະຍົມ ຫຼື ສູງກວ່າ;

25). ອັດຕາສ່ວນຕໍ່ພົນລະເມືອງທີ່ເຮັດວຽກເສດຖະກິດ;

26). ອັດຕາສ່ວນການຈ້າງງານໃນຂະແໜງກະສິກຳ;

27). ອັດຕາສ່ວນການຈ້າງງານໃນຂະແໜງອຸດສາຫະກຳ;

28). ອັດຕາສ່ວນການຈ້າງງານໃນຂະແໜງການບໍລິການ;

29). ອັດຕາສ່ວນການຈ້າງງານແມ່ຍິງໃນຂະແໜງທີ່ບໍ່ແມ່ນກະສິກຳ;

30). ອັດຕາສ່ວນຂອງຄົນທີ່ເຮັດວຽກໃຫ້ຕົນເອງ ແລະ ເຮັດວຽກຊ່ວຍຄອບຄົວຕໍ່ການຈ້າງງານທັງໝົດ;

31). ອັດຕາສ່ວນກຳລັງແຮງງານຂອງຄອບຄົວທີ່ປະກອບສ່ວນໃນການເຮັດວຽກເສດຖະກິດ;

32). ອັດຕາສ່ວນຮ້ອຍຂອງເດັກທີ່ອາຍຸຕ່ຳກວ່າ  15ປີ ທີ່ພວມອອກແຮງງານຢູ່;

33). ອັດຕາການຈ້າງງານໃນຂະແໜງອຸດສາຫະກຳ ແລະ ຫົວໜ່ວຍທຸລະກິດ ຢູ່ໃນອາຊີບສີຂຽວ;

34). ອັດຕາສ່ວນການມີວຽກເຮັດງານທຳ ແຍກເພດ;

35). ຈຳນວນການຈ້າງງານໃນຊຸມຊົນ, ສັງຄົມ ແລະ ບຸກຄົນ ແຍກເພດ;

36). ຈຳນວນການຈ້າງງານໃນການບໍລິການອື່ນໆ ແຍກເພດ;

37). ຈຳນວນການຈ້າງງານໃນຂະແໜງ ພະລັງງານ-ບໍ່ແຮ່ ແຍກເພດ;

38). ຈຳນວນການຈ້າງງານໃນຂະແໜງກໍ່ສ້າງ ແຍກເພດ;

39). ຈຳນວນຈ້າງງານແຮງງານໜຸ່ມ ອາຍຸ 15-24 ປີ ທີ່ຢູ່ໃນພາກການຜະລິດ ແຍກເພດ;

40). ຈຳນວນຜູ້ທີ່ໄດ້ຮັບການຈ້າງງານໃນທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ ແຍກເພດ;

41). ຈຳນວນການຈ້າງງານໃນຫົວໜ່ວຍທຸລະກິດຂາຍຍົກ-ຂາຍຍ່ອຍ ແຍກເພດ;

42). ຈຳນວນຜູ້ເຮັດວຽກບໍ່ເຕັມເວລາ ແຍກເພດ;

43). ອັດຕາການຂະຫຍາຍຕົວຂອງຜະລິດຕະພາບແຮງງານຕໍ່ຜູ້ມີວຽກເຮັດງານທຳ;

44). ຜະລິດຕະພາບແຮງງານໃນຂະແໜງຊັບພະຍາກອນທຳມະຊາດ;

45). ຜະລິດຕະພາບແຮງງານໃນຂະແໜງທີ່ບໍ່ແມ່ນຊັບພະຍາກອນທຳມະຊາດ.

## 3. ກົມຄຸ້ມຄອງແຮງງານ

1). ດັດສະນີຄ່າແຮງງານສະເລ່ຍຕໍ່ເດືອນ

- ຄ່າແຮງງານສະເລ່ຍ ຈາກການກວດກາແຮງງານ ຕາມຂົງເຂດເສດຖະກິດ, ຕາມລະດັບຜູ້ບໍລິຫານ ແລະ ກຳມະກອນ;
- ດັດສະນີຄ່າແຮງງານສະເລ່ຍຕໍ່ເດືອນໃນຂະແໜງອຸດສາຫະກຳປຸງແຕ່ງ;
- ຄ່າແຮງງານສະເລ່ຍຕໍ່ເດືອນໃນຂະແໜງອຸດສາຫະກຳປຸງແຕ່ງ;

2). ຈຳນວນຫົວໜ່ວຍແຮງງານທີ່ໄດ້ຮັບການກວດກາແຮງງານທັງໝົດ ຕາມຂະແໜງການ

2.1). ຈຳນວນຫົວໜ່ວຍແຮງງານທີ່ໄດ້ກວດກາປົກກະຕິ ຕາມຂະແໜງການ;

2.2). ຈຳນວນຫົວໜ່ວຍແຮງງານທີ່ໄດ້ກວດກາຕິດຕາມຜົນ ຕາມຂະແໜງການ;

2.3). ຈຳນວນຫົວໜ່ວຍແຮງງານທີ່ໄດ້ກວດກາພິເສດ ຕາມຂະແໜງການ;

3). ຈຳນວນແຮງງານໄວໜຸ່ມທີ່ມີອາຍຸຕ່ຳກວ່າ 14 ປີ ແຍກເພດ ແຕ່ບໍ່ຫຼຸດ 12 ປີ;

4). ຈຳນວນແຮງງານໜຸ່ມທີ່ມີອາຍຸ ແຕ່ 18 ປີ ແຕ່ບໍ່ຫຼຸດ 14 ປີ ແຍກເພດ;

5). ຈຳນວນແຮງງານເດັກທີ່ມີອາຍຸຕ່ຳກວ່າ 12 ປີ;

- ຈຳນວນແຮງງານທີ່ເປັນຄົນພິການ ແລະ ເສຍອົງຄະ ແຍກເພດ;
- ຈຳນວນແຮງງານຕ່າງປະເທດ ທີ່ເຂົ້າມາເຮັດວຽກແບບຖືກຕ້ອງຕາມກົດໝາຍ ແຍກເພດ, ສັນຊາດ , ຕາມຂະແໜງການ;
- ຈຳນວນແຮງງານຕ່າງປະເທດບໍ່ຂຶ້ນທະບຽນ ແຍກເພດ, ສັນຊາດ, ຕາມຂະແໜງການ.
- ຈຳນວນຜູ້ອອກແຮງງານທີ່ມີສັນຍາແຮງງານ, ເປັນລາຍລັກອັກສອນ;
- ຈຳນວນຫົວໜ່ວຍແຮງງານທີ່ເຂົ້າປະກັນສັງຄົມ;
- ຈຳນວນຜູ້ອອກແຮງງານທີ່ມີກົດລະບຽບພາຍໃນ

6). ຈຳນວນຜູ້ຖືກເຄາະຮ້າຍຈາກອຸປະຕິເຫດແຮງງານ ຕາມຂະແໜງການ, ເພດ, ແຮງງານເຄື່ອນຍ້າຍ (ແຍກຕາມຂະແໜງການເສດຖະກິດ);

7). ຈຳນວນຫົວໜ່ວຍແຮງງານທີ່ໄດ້ອະນຸມັດນຳໃຊ້ລະບຽບພາຍໃນ;

8). ອັດຕາສ່ວນແຮງງານທີ່ໄດ້ຮັບຄ່າຈ້າງຕ່ຳກວ່າມາດຖານ;

9). ຈຳນວນຊົ່ວໂມງເຮັດວຽກຕໍ່ມື້;

10). ຊົ່ວໂມງເຮັດວຽກສົມທຽບກັບຄ່າແຮງງານ;

11). ຈຳນວນຂໍ້ຂັດແຍ່ງແຮງງານທັງໝົດ

- ຈຳນວນຂໍ້ຂັດແຍ່ງແຮງງານເປັນກໍລະນີ ດ້ານກົດໝາຍ (ແຍກຕາມຂະແໜງການ);
- ຈຳນວນຂໍ້ຂັດແຍ່ງດ້ານຜົນປະໂຫຍດ (ແຍກຕາມຂະແໜງການ);
- ຈຳນວນຂໍ້ຂັດແຍ່ງແຮງງານທີ່ໄດ້ແກ້ໄຂເປັນກໍລະນີ ສາມາດແກ້ໄຂໄດ້ (ແຍກຕາມຂະແໜງການ);
- ຈຳນວນຂໍ້ຂັດແຍ່ງແຮງງານທີ່ໄດ້ສົ່ງໃຫ້ສານພິຈາລະນາ ຕັດສິນ ເປັນກໍລະນີ (ແຍກຕາມຂະແໜງການ);

12). ຈຳນວນຫົວໜ່ວຍແຮງງານທັງໝົດ ຕາມຂະແໜງການ;

13). ຈຳນວນການຈ້າງງານທັງໝົດ ຕາມຂະແໜງການເສດຖະກິດ, ເພດ;

14). ສາເຫດອຸປະຕິເຫດແຮງງານ, ຕາມຂະແໜງການເສດຖະກິດ, ເພດ;

15). ສາເຫດພະຍາດອາຊີບ, ຕາມຂະແໜງການເສດຖະກິດ, ເພດ;

16). ອັດຕາຄວາມຖີ່ການບາດເຈັບຂອງແຮງງານເຄື່ອນຍ້າຍ ຍ້ອນການປະກອບອາຊີບທີ່ມີການເສຍຊີວິດ ແລະ ບາດເຈັບ ອັດຕາຄວາມຖີ່ການບາດເຈັບຂອງຜູ້ອອກແຮງງານໃນສະຖານທີ່ເຮັດວຽກ;

17). ແຮງງານການຜະລິດ ແລະ ຫົວໜ່ວຍແຮງງານກັບຄ່າແຮງງານ;

18). ຄ່າແຮງງານລະດັບກາງຕໍ່ປີທີ່ສາມາດສະໜອງໃຫ້ຜູ້ຊຳນານງານ;

19). ຄ່າແຮງງານສະເລ່ຍຕໍ່ປີທີ່ສາມາດສະໜອງໃຫ້ວິຊາການ;

20). ການຫຼຸດຜ່ອນຄວາມສ່ຽງຕໍ່ສຸຂະພາບ ແລະ ຄວາມປອດໄພ ທີ່ສົ່ງຜົນກະທົບໂດຍກົງຕໍ່ກັບມົນລະພິດເຊັ່ນ: ສຽງລົບກວນ ແລະ ການສັ່ນສະເທືອນ, ຄວາມບໍ່ສະອາດ ແລະ ບໍ່ຖືກຫຼັກສຸຂະອະນາໄມ, ຄວາມບໍ່ປອດໄພຂອງສະພາບແວດລ້ອມ ແລະ ລະເບີດບໍ່ທັນແຕກ.

## 4. ກົມປະກັນສັງຄົມ

1). ຈຳນວນຜູ້ປະກັນຕົນຕາມລະບົບລັດຖະກອນ ແຍກເພດ;

2). ຈຳນວນຜູ້ປະກັນຕົນຕາມລະບົບຫົວໜ່ວຍແຮງງານ ແຍກເພດ;

3). ຈຳນວນຜູ້ປະກັນສຸຂະພາບ ຊຸມຊົນ ແລະ ຜູ້ທຸກຍາກ ແຍກເພດ;

4). ຈຳນວນຜູ້ປະກັນໄພ ຕາມລະບົບປະກັນໄພເອກະຊົນ ແຍກເພດ.

## 5. ກົມນະໂຍບາຍຕໍ່ຜູ້ມີຜົນງານ, ພິການ ແລະ ຜູ້ອາຍຸສູງ

1). ຈຳນວນຜູ້ອາຍຸສູງ ແຍກເພດ;
2). ຈຳນວນຜູ້ອາຍຸສູງປ່ຽວພອຍ ແຍກເພດ;
3). ຈຳນວນຜູ້ພິການ ໃນການຍ່າງ ແຍກເພດ;
4). ຈຳນວນຜູ້ພິການ ໃນການເບິ່ງເຫັນ ແຍກເພດ;
5). ຈຳນວນຜູ້ພິການ ໃນການປາກເວົ້າ-ການສື່ສານ ແຍກເພດ;
6). ຈຳນວນຜູ້ພິການ ໃນການຈື່ຈຳ ແຍກເພດ;
7). ຈຳນວນຜູ້ພິການ ໃນການໄດ້ຍິນ ແຍກເພດ;
8). ຈຳນວນຜູ້ພິການ ດູແລຕົວເອງ.

## 6. ກົມສັງຄົມສົງເຄາະ

1). ຈຳນວນເດັກກຳພ້າ-ກຳພອຍ ແຍກເພດ;
2). ຈຳນວນເດັກຂ້າງຖະໜົນ ແຍກເພດ;
2). ຈຳນວນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ໄດ້ຮັບການຊ່ວຍເຫລືອ ແຍກເພດ;
3). ຈຳນວນເດັກຂໍທານ ແຍກເພດ;
4). ຈຳນວນເດັກຖືກປະລະ ແຍກເພດ;
5). ຈຳນວນເດັກພິການ (ທີ່ອາໃສຢູ່ນຳຄອບຄົວທີ່ທຸກຍາກ) ແຍກເພດ;
6). ຈຳນວນເດັກຖືກທຳຮ້າຍຮ່າງກາຍ ແຍກເພດ;
7). ຈຳນວນເດັກຖືກທາລຸນທາງເພດ-ເປັນໂສເພນີ ແຍກເພດ;
8). ຈຳນວນເດັກເຮັດວຽກໃນສະພາບທີ່ເປັນອັນຕະລາຍຮ້າຍແຮງຕໍ່ຊີວິດ, ສຸຂະພາບ ຫລື ຂູດຮີດແຮງງານ ແຍກເພດ;
9). ຈຳນວນເດັກອົບພະຍົບ ແຍກເພດ;
10). ຈຳນວນເດັກຕິດຢາເສບຕິດ ແຍກເພດ;
11). ຈຳນວນເດັກທີ່ໄດ້ຮັບຜົນກະທົບຈາກໂຣກເອດ/ເຊື້ອເອັສໄອວີ ແຍກເພດ;
12). ຈຳນວນເດັກທີ່ເປັນຜູ້ຖືກເສຍຫາຍໃນຂະບວນການດຳເນີນຄະດີ ແຍກເພດ;
13). ຈຳນວນຕາໜ່າງປົກປ້ອງເດັກ ຂັ້ນແຂວງ, ເມືອງ ແລະ ບ້ານ;
14). ຈຳນວນຄອບຄົວທີ່ໄດ້ຮັບຜົນປະໂຫຍດຈາກກອງທຶນສັງຄົມສົງເຄາະ;
15). ຈຳນວນປະຊາຊົນທີ່ໄດ້ຮັບຜົນປະໂຫຍດຈາກກອງທຶນສັງຄົມສົງເຄາະ ແຍກເພດ;
15). ຈຳນວນຜູ້ອາຍຸສູງ 60 ປີຂຶ້ນໄປທີ່ປ່ຽວພອຍ, ທຸກຍາກ ຫລື ອາໄສຢູ່ນຳຄອບຄົວທີ່ທຸກຍາກ ແຍກເພດ;
16). ວັນ, ເດືອນ, ປີ ເກີດໄພພິບັດ
17). ປະເພດໄພພິບັດ;
18). ສະຖານທີ່ເກີດໄພພິບັດ ( ແຂວງ, ເມືອງ, ບ້ານ ທີ່ໄດ້ຮັບຜົນກະທົບ);
19). ຈຳນວນຄອບຄົວທີ່ໄດ້ຮັບຜົນກະທົບ ຈາກໄພພິບັດ;
20). ຈຳນວນປະຊາຊົນທີ່ໄດ້ຮັບຜົນກະທົບ ຈາກໄພພິບັດ ແຍກເພດ;
21). ຈຳນວນຜູ້ເສຍຊີວິດ ຈາກໄພພິບັດ ແຍກເພດ;
22). ຈຳນວນ ຜູ້ໄດ້ຮັບບາດເຈັບ ຈາກໄພພິບັດ ແຍກເພດ;
23). ຈຳນວນຜູ້ສູນຫາຍ ຈາກໄພພິບັດ ແຍກເພດ;
24). ຈຳນວນຜູ້ໄດ້ຮັບການຍົກຍ້າຍໄປພັກເຊົາຊົ່ວຄາວ ຈາກໄພພິບັດ;

25). ຈຳນວນຄົວເຮືອນທີ່ໄດ້ຮັບຜົນກະທົບ;
26). ຈຳນວນເລົ້າເຂົ້າໄດ້ຮັບຜົນກະທົບ;
27). ຈຳນວນເນື້ອທີ່ທຳການຜະລິດເສຍຫາຍ (ເນື້ອທີ່ນາ, ໄຮ່ ແລະ ສວນ);
28). ຄາດຄະເນມູນຄ່າເສຍຫາຍ (ກີບ)
29). ຈຳນວນຄອບຄົວ ໄດ້ຮັບການຊ່ວຍເຫລືອເບື້ອງຕົ້ນ
30). ຈຳນວນປະຊາຊົນທີ່ໄດ້ຮັບການຊ່ວຍເຫຼືອເບື້ອງຕົ້ນ ແຍກເພດ;
31). ຈຳນວນເງິນທີ່ໄດ້ຮັບການຊ່ວຍເຫຼືອເບື້ອງຕົ້ນ (ກີບ)
32). ມູນຄ່າຄວາມຕ້ອງການ ການຊ່ວຍເຫລືອຮີບດ່ວນຂອງປະຊາຊົນທີ່ໄດ້ຮັບຜົນກະທົບ (ກີບ);
33). ຈຳນວນຄັ້ງຂອງການເກີດໄພພິບັດ ແຍກຕາມປະເພດຂອງໄພພິບັດ;
34). ຈຳນວນຜູ້ເສຍຊີວິດ, ສູນຫາຍ ແລະ ຜູ້ທີ່ໄດ້ຮັບຜົນກະທົບ ຈາກໄພພິບັດ
- ຈຳນວນຜູ້ເສຍຊີວິດຕໍ່ 100,000 ຄົນ;
- ຈຳນວນຜູ້ສູນຫາຍຕໍ່ 100,000 ຄົນ;
- ຈຳນວນຜູ້ໄດ້ຮັບຜົນກະທົບຕໍ່ 100,000 ຄົນ;

35). ການໃຊ້ຈ່າຍໂຄງການຊ່ວຍເຫຼືອສັງຄົມ.

## 7. ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ-ນະຄອນຫຼວງວຽງຈັນ

ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ-ນະຄອນຫຼວງ ເກັບກຳ, ຄົ້ນຄວ້າວິໄຈ, ສະໜອງ ແລະ ປ້ອນຂໍ້ມູນ ຕົວຊີ້ວັດຕ່າງໆ ຂ້າງເທິງນີ້ ຕາມທີ່ໄດ້ແບ່ງຄວາມຄວາມຮັບຜິດຊອບໃຫ້ບັນດາກົມ ເຂົ້າໃນຖານຂໍ້ມູນອອນໄລ ຂອງແຂວງ-ນະຄອນຫລວງ www.stat.molsw.gov.la ເປັນປົກກະຕິ.

## 8. ຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ

1). ລະບົບປະກັນສັງຄົມສຳລັບພາກລັດ ແຍກເພດ
- ຈຳນວນຄູ່ສົມລົດ ທີ່ເກີດສິດ ແຍກເພດ;
- ຈຳນວນລູກທີ່ເກີດສິດ ແຍກເພດ;
- ຈຳນວນຜູ້ເກີດສິດປິ່ນປົວສຸຂະພາບ ແຍກເພດ;
- ຈຳນວນຜູ້ຮັບອຸດໜູນບຳເນັດອອກລູກ;
- ຈຳນວນເງິນອຸດໜູນບຳເນັດອອກລູກ;
- ຈຳນວນຜູ້ໄດ້ຮັບອຸດໜູນປ່ວຍການ ແຍກເພດ;
- ຈຳນວນເງິນອຸດໜູນປ່ວຍການ;
- ຈຳນວນພະນັກງານເສຍອົງຄະ ແຍກເພດ;
- ຈຳນວນເງິນອຸດໜູນເສຍອົງຄະ;
- ຈຳນວນພະນັກງານບຳນານ ແຍກເພດ;
- ຈຳນວນເງິນອຸດໜູນບຳນານ;
- ຈຳນວນຜູ້ຮັບການອຸດໜູນເທື່ອດຽວ ແຍກເພດ;
- ຈຳນວນເງິນອຸດໜູນເທື່ອດຽວ;
- ຈຳນວນຜູ້ເສຍຊີວິດ ແຍກເພດ;
- ຈຳນວນເງິນອຸດໜູນເສຍຊີວິດ;
- ຈຳນວນຜູ້ຮັບອຸດໜູນສະມາຊິກຄອບຄົວ, ຜົວ ຫລື ເມຍ, ພໍ່ ຫລື ແມ່ ຫລື ລູກກຳພ້າ ແຍກເພດ;

- ຈຳນວນເງິນອຸດໜູນສະມາຊິກຄອບຄົວ;
- ຈຳນວນຜູ້ຮັບອຸດໜູນອຸປະຕິເຫດແຮງງານ ແຍກເພດ;
- ຈຳນວນເງິນອຸດໜູນ ກໍລະນີອຸປະຕິເຫດແຮງງານ.

2). ລະບົບປະກັນສັງຄົມສຳລັບພາກວິສາຫະກິດ ແລະ ຜູ້ສະໝັກໃຈ ແຍກເພດ

- ຈຳນວນຜູ້ປະກັນຕົນພາກວິສາຫະກິດ ແລະ ຜູ້ສະໝັກໃຈ ແຍກເພດ;
- ຈຳນວນຄູ່ສົມລົດ ທີ່ເກີດສິດ ແຍກເພດ;
- ຈຳນວນລູກທີ່ເກີດສິດ ແຍກເພດ;
- ຈຳນວນຜູ້ເກີດສິດປິ່ນປົວສຸຂະພາບ ແຍກເພດ;
- ຈຳນວນຜູ້ຮັບການອຸດໜູນອອກລູກ;
- ຈຳນວນເງິນອຸດໜູນອອກລູກ;
- ຈຳນວນຜູ້ຮັບອຸດໜູນບຳເນັດອອກລູກ;
- ຈຳນວນເງິນອຸດໜູນບຳເນັດອອກລູກ;
- ຈຳນວນຜູ້ໄດ້ຮັບອຸດໜຸນປ່ອຍການ ແຍກເພດ;
- ຈຳນວນເງິນອຸດໜູນປ່ອຍການ;
- ຈຳນວນຜູ້ຮັບອຸດໜູນເສຍອົງຄະ ແຍກເພດ;
- ຈຳນວນເງິນອຸດໜູນເສຍອົງຄະ;
- ຈຳນວນຜູ້ຮັບອຸດໜູນບຳນານ ແຍກເພດ;
- ຈຳນວນເງິນອຸດໜູນບຳນານ;
- ຈຳນວນຜູ້ຮັບການອຸດໜູນເທື່ອດຽວ ແຍກເພດ;
- ຈຳນວນເງິນອຸດໜູນເທື່ອດຽວ;
- ຈຳນວນຜູ້ຮັບອຸດໜູນເສຍຊີວິດ ແຍກເພດ;
- ຈຳນວນເງິນອຸດໜູນເສຍຊີວິດ;
- ຈຳນວນຜູ້ຮັບອຸດໜູນສະມາຊິກຄອບຄົວ, ຜົວ ຫລື ເມຍ, ພໍ່ ຫລື ແມ່, ຫລື ລູກກຳພ້າ ແຍກເພດ;
- ຈຳນວນເງິນອຸດໜູນສະມາຊິກຄອບຄົວ;
- ຈຳນວນຜູ້ໄດ້ຮັບອຸດໜູນວ່າງງານ ແຍກເພດ;
- ຈຳນວນເງິນອຸດໜູນວ່າງງານ;
- ການໃຊ້ຈ່າຍໃນໂຄງການອຸດໜູນວ່າງງານ;
- ຈຳນວນຜູ້ຮັບອຸດໜູນອຸປະຕິເຫດແຮງງານ ແຍກເພດ;
- ຈຳນວນເງິນອຸດໜູນ ກໍລະນີອຸປະຕິເຫດແຮງງານ;

3). ຈຳນວນລາຍຮັບກອງທຶນປະກັນສັງຄົມທັງໝົດ;

4). ຈຳນວນລາຍຈ່າຍກອງທຶນປະກັນສັງຄົມທັງໝົດ;

5). ຈຳນວນເງິນສົມທົບຈາກຜູ້ໃຊ້ແຮງງານ ຫຼື ຫົວໜ່ວຍແຮງງານ;

6). ຈຳນວນເງິນສົມທົບຈາກລັດຖະບານ;

7). ຈຳນວນເງິນສົມທົບຈາກຜູ້ປະກັນຕົນ;

8). ຈຳນວນຫົວໜ່ວຍແຮງງານທີ່ໄດ້ເຂົ້າປະກັນສັງຄົມທັງໝົດ;

## 9. ສະຖາບັນພັດທະນາສີມືແຮງງານລາວ-ເກົາຫລີ

1). ຈຳນວນຜູ້ຕ້ອງການຝຶກສີມືແຮງງານ ຫຼື ວິຊາຊີບ ແຍກເພດ;

2). ຈຳນວນຜູ້ເຂົ້າຝຶກສີມືແຮງງານ ຫຼື ວິຊາຊີບ ແຍກເພດ, ສາຂາວິຊາຊີບ;
3). ຈຳນວນຜູ້ຈົບການຝຶກສີມືແຮງງານ ຫຼື ວິຊາຊີບ ແຍກເພດ, ສາຂາວິຊາຊີບ;
4). ຈຳນວນຜູ້ທົດສອບສີມືແຮງງານແຍກຕາມສາຂາວິຊາຊີບ ແລະ ລະດັບການທົດສອບ, ແຍກເພດ;
5). ຈຳນວນຜູ້ເຂົ້າເຮັດວຽກ ຫລັງຈາກຝຶກ ແຍກເພດ.

## 10. ຫ້ອງການ ອົງການກາແດງລາວ

1). ຈຳນວນອາສາສະໝັກຊ່ວຍເຫຼືອຜູ້ປະສົບອຸປະຕິບັດທາງຖະໜົນກ່ອນນຳສົ່ງໂຮງໝໍ ແຍກເພດ;
2). ຈຳນວນຄັ້ງການຊ່ວຍເຫຼືອຜູ້ປະສົບອຸປະຕິເຫດທາງຖະໜົນ;
3). ຈຳນວນຜູ້ທີ່ໄດ້ຮັບບາດເຈັບ ຈາກອຸປະຕິເຫດທາງຖະໜົນ ແຍກເພດ;
4). ຈຳນວນອາສາສະໝັກຕ້ານເອດ ແຍກເພດ;
5). ຈຳນວນຜູ້ທີ່ໄດ້ຮັບການຝຶກອົບຮົມປະຖົມພະຍາບານ ແຍກເພດ;
6). ຈຳນວນຄູຝຶກປະຖົມພະຍາບານ ແຍກເພດ;
7). ຈຳນວນການສະໜອງວິດຖ່າຍ;
8). ຈຳນວນຜູ້ທີ່ໄດ້ຮັບຜົນປະໂຫຍດທັງໝົດ ແຍກເພດ;
9). ຈຳນວນການສະໜອງນໍ້າສະອາດ (ນໍ້າສ້າງ, ນໍ້າບາດານ, ນໍ້າລິນ);
10). ມູນຄ່າການຊ່ວຍເຫຼືອວຽກງານສຸຂະພາບຊຸມຊົນ;
11). ຈຳນວນຄັ້ງຂົນຂວາຍຊອກຫາແຫຼ່ງທຶນໃນຂອບເຂດທົ່ວປະເທດ;
12). ຈຳນວນຂົນຂວາຍຊອກຫາແຫຼ່ງທຶນໃນຂອບເຂດທົ່ວປະເທດ;
13). ໄດ້ຮັບການຊ່ວຍເຫຼືອວຽກໂຄສະນາ ແລະ ຊອກຫາແຫຼ່ງທຶນ;
14). ຈຳນວນ (ເທື່ອຄັ້ງ) ການເກີດໄພພິບັດ;
15). ຈຳນວນພື້ນທີ່ໄດ້ຮັບຜົນກະທົບ;
16). ຈຳນວນຜູ້ທີ່ໄດ້ຮັບຜົນກະທົບ;
17). ຈຳນວນພື້ນທີ່ໄດ້ຮັບການຊ່ວຍເຫຼືອ;
18). ຈຳນວນຜູ້ທີ່ໄດ້ຮັບການຊ່ວຍເຫຼືອ;
19). ມູນຄ່າຊ່ວຍເຫຼືອວຽກງານຊ່ວຍເຫຼືອບັນເທົາທຸກ;
20). ຈຳນວນຖົງເລືອດທີ່ຈັດຫາໄດ້;
21). ຈຳນວນຖົງເລືອດທີ່ແຈກຈ່າຍໄດ້;
22). ຈຳນວນຮັບຄ່າຊົດເຊີຍເລືອດ;
23). ມູນຄ່າຊ່ວຍເຫຼືອທັງໝົດວຽກງານເລືອດ.

## 11. ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດ ບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ

1). ຈຳນວນຜູ້ຖືກບາດເຈັບ ແລະ ເສຍຊີວິດຈາກ ລະເບີດບໍ່ທັນແຕກ ຕາມກຸ່ມອາຍຸ ແລະ ເພດ;
2). ອັດຕາສ່ວນຂອງປະຊາກອນຢູ່ໃນບ້ານ ທີ່ໄດ້ຮັບຜົນກະທົບຈາກລະເບີດບໍ່ທັນແຕກ ຕາມກຸ່ມ, ເພດ ແລະ ຄົນພິການ;
3). ຈຳນວນບ້ານທີ່ໄດ້ຮັບການສຳຫຼວດບໍ່ແມ່ນວິຊາການ;
4). ຈຳນວນຈຸດສຸມພັດທະນາ ຂອງສູນກາງ ແລະ ທ້ອງຖິ່ນ ທີ່ໄດ້ຮັບການສຳຫຼວດວິຊາການ;
5). ຕົວເລກພື້ນທີ່ມີລະເບີດບໍ່ທັນແຕກຕົກຄ້າງໃນຈຸດສຸມພັດທະນາ ແລະໂຄງການຕ່າງໆທີ່ໄດ້ຮັບການກວດກູ້;
6). ອັດຕາສ່ວນທີ່ຍັງເຫຼືອຂອງພື້ນທີ່ມີລະເບີດບໍ່ທັນແຕກ ທີ່ຈະຕ້ອງໄດ້ກວດກູ້;

7). ຈຳນວນບ້ານທຸກຍາກທີ່ຍັງເຫຼືອ ທີ່ມີລະເບີດບໍ່ທັນແຕກຕົກຄ້າງ ທີ່ຕ້ອງໄດ້ກວດກູ້ ແລະ ລາຍງານ;

8). ຈຳນວນຜູ້ຖືກເຄາະຮ້າຍຈາກອຸປະຕິເຫດລະເບີດບໍ່ທັນແຕກ ທີ່ໄດ້ລາຍງານ ແລະ ມີການວິເຄາະຫາສາເຫດຂອງການເກີດອຸປະຕິເຫດ;

9). ຈຳນວນຜູ້ລອດຊີວິດຈາກລະເບີດບໍ່ທັນແຕກ ທີ່ໄດ້ຮັບການຊ່ວຍເຫຼືອ;

10). ອັດຕາສ່ວນຂອງຜູ້ລອດຊີວິດຈາກລະເບີດບໍ່ທັນກແຕກ ຢູ່ໃນເກນອາຍຸທີ່ສາມາດທຳມາຫາກິນໄດ້ແຕ່ບໍ່ສາມາດ ສ້າງລາຍຮັບຂັ້ນພື້ນຖານໄດ້ຢ່າງພຽງພໍ ແລະ ສາມາດເຂົ້າເຖິງລາຍຮັບຂັ້ນພື້ນຖານໄດ້;

11). ອັດຕາສ່ວນຂອງຜູ້ລອດຊີວິດ ແລະ ຜູ້ຖືກເຄາະຮ້າຍຈາກລະເບີດບໍ່ທັນແຕກ ທີ່ຖືກເຊື່ອມສານເຂົ້າໃນລະບົບການປິ່ນປົວສຸຂະພາບ, ການສຶກສາ ແລະ ການຈ້າງງານ;

12). ພື້ນທີ່ໄດ້ຮັບການອະນຸລັກ ແລະ ຟື້ນຟູ ເພື່ອຫຼຸດຜ່ອນຄວາມເສຍຫາຍຈາກສິ່ງປົນເປື້ອນ ຊຶ່ງປະກອບດ້ວຍສານເຄມີ ແລະ ສິ່ງປົນເປື້ອນຈາກລະເບີດບໍ່ທັນແຕກ ແລະ ການສູນເສຍຄວາມສົມດູນຂອງພື້ນທີດັ່ງກ່າວ.

## II. ວິທີຈັດຕັ້ງປະຕິບັດ

1. ມອບໃຫ້ກົມແຜນການ ແລະ ການຮ່ວມມືສາກົນ ເປັນໃຈກາງໃນການຕິດຕາມ, ເກັບກຳ ແລະ ສະໜອງຂໍ້ມູນສະຖິຕິໃຫ້ຖືກຕ້ອງ, ຊັດເຈນ ແລະ ທັນເວລາ ເພື່ອຮັບໃຊ້ການຈັດຕັ້ງປະຕິບັດຕາມແຜນພັດທະນາແຮງງານ ແລະ ສະຫວັດດີການສັງຄົມ ໃນແຕ່ລະໄລຍະ.
2. ມອບໃຫ້ບັນດາກົມ ແລະ ຫ້ອງພ່ວຍວິຊາການ ອ້ອມຂ້າງ ກະຊວງ ຮສສ ເກັບກຳ, ຄົ້ນຄວ້າ, ວິໄຈ, ສະໜອງ ແລະ ປ້ອນຂໍ້ມູນຕົວຊີ້ວັດຕ່າງໆ ຕາມຄວາມຮັບຜິດຊອບຂອງຕົນເຂົ້າໃນຖານຂໍ້ມູນອອນໄລຂອງກົມ www.stat.molsw.gov.la ເປັນປົກກະຕິ.
3. ມອບໃຫ້ພະແນກ ແຮງງານ ແລະ ສະຫວັດດີການສັງຄົມ ແຂວງ-ນະຄອນຫຼວງ ແບ່ງຄວາມຮັບຜິດຊອບບັນດາຕົວຊີ້ວັດຕ່າງໆ ຂ້າງເທິງນີ້ ໃຫ້ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມຂັ້ນເມືອງ ຕາມຄວາມເໝາະສົມ ເພື່ອເກັບກຳ, ຄົ້ນຄວ້າ, ວິໄຈ, ສະໜອງ ແລະ ປ້ອນຂໍ້ມູນ ຕົວຊີ້ວັດຕ່າງໆ ຕາມຄວາມຮັບຜິດຊອບຂອງຕົນເຂົ້າໃນຖານຂໍ້ມູນອອນໄລຂອງເມືອງ www.stat.molsw.gov.la ເປັນປົກກະຕິ.
4. ສະເພາະ ວຽກງານຫ້ອງການອົງການກາແດງລາວ, ວຽກງານຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ແລະ ວຽກງານຫ້ອງການກອງທຶນປະກັນສັງຄົມ ຢູ່ແຂວງ-ນະຄອນຫລວງ ແມ່ນໃຫ້ເກັບກຳຂໍ້ມູນ ແລະ ສະໜອງ ໃຫ້ຫ້ອງການຂອງຕົນຢູ່ສູນກາງ.
5. ໃຫ້ຫ້ອງການກະຊວງ, ບັນດາກົມ, ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ-ນະຄອນຫຼວງ, ຫ້ອງການອົງການກາແດງລາວ, ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ, ຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ ແລະ ສະຖາບັນພັດທະນາສີມືແຮງງານລາວ-ເກົາຫຼີ, ທຸກພາກສ່ວນການຈັດຕັ້ງທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດແຈ້ງການແນະນຳ ສະບັບນີ້ ຢ່າງເຂັ້ມງວດ.

**ລັດຖະມົນຕີ**

ປອ. ຄຳແພງ ໄຊສົມແພງ